ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# 2022 ທຫລ.ຫຼບ ມີຜົນງານເດັ່ນຫຼາຍດ້ານ



ໃນໂອກາດປີໃໝ່ ຄສ 2023; ທ່ານ ນາງ ໂພທິຈັນ ທາມະເທວາ ຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ (ທຫລ.ຫຼບ) ແຂວງຫຼວງພະບາງ ໄດ້ນຳສະເໜີວຽກງານພົ້ນເດັ່ນໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງ ທຫລ.ຫຼບ ໃນໄລຍະປີ 2022 ຜ່ານມາ ໂດຍໄດ້ສືບຕໍ່ຮັກສາສະເຖຍລະພາບທາງດ້ານເງິນຕາ ແລະ ປະກອບສ່ວນຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ພາຍໃນທ້ອງຖິ່ນ; ທຫລ.ຫຼບ ໄດ້ຈັດຕັ້ງປະຕິບັດຕາມນະໂຍບາຍລວມຂອງ ທຫລ ທີ່ກຳນົດອອກໃນແຕ່ລະໄລຍະໃນນີ້ໄດ້ຕິດຕາມການຊື້-ຂາຍເງິນຕາຕ່າງປະເທດ ແລະ ອັດຕາແລກປ່ຽນປະຈຳວັນ ເພື່ອເປັນບ່ອນອີງໃນການຄຸ້ມຄອງຕິດຕາມສະພາບການເຄື່ອນໄຫວເງິນຕາຕ່າງປະເທດ; ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງແລະຕິດຕາມການເຄື່ອນໄຫວຂອງຮ້ານແລກປ່ຽນເງິນຕາຕົວແທນຂອງທະນາຄານທຸລະກິດ ແລະ ກວດກາບັນດາຮ້ານຄ້າທີ່ແລກປ່ຽນໂດຍບໍ່ໄດ້ຮັບອະນຸຍາດ ໂດຍສົມທົບກັບພະແນກການກ່ຽວຂ້ອງຂອງແຂວງ.

ພ້ອມກັນນັ້ນ, ກໍ່ໄດ້ສົມທົບກັບທະນາຄານທຸລະກິດ ທີ່ມີຮ້ານແລກປ່ຽນເງິນຕາຕົວແທນ ກວດກາການປະຕິບັດລະບຽບຢູ່ພາຍໃນ 2 ແຂວງ ແລະ ໄດ້ປະຕິບັດມາດຕະການ ຕໍ່ຮ້ານແລກປ່ຽນເງິນຕາທີ່ມີການລະເມີດລະບຽບ ດ້ວຍການຖອນໃບອະນຸຍາດຮ້ານແລກປ່ຽນເງິນຕາ ຈຳນວນ 22 ຮ້ານ (ແຂວງຫຼວງພະບາງ 14 ຮ້ານ ແລະ ແຂວງໄຊຍະບູລີ 8 ຮ້ານ). ມາຮອດປະຈຸບັນຮ້ານແລກປ່ຽນເງິນຕາຕົວແທນທະນາຄານທຸລະກິດພາຍໃນ 2 ແຂວງມີ 9 ຮ້ານ (ແຂວງຫຼວງພະບາງ 8 ຮ້ານ, ໄຊຍະບູລີ 1 ຮ້ານ), ໄດ້ສືບຕໍ່ລົງກວດກາ ແລະຕັກເຕືອນຮ້ານແລກປ່ຽນເງິນຕາ ທີ່ຖືກຖອນໃບອະນຸຍາດໄປແລ້ວໃຫ້ຢຸດເຊົາການເຄື່ອນໄຫວແລກປ່ຽນພ້ອມທັງປົດປ້າຍຮ້ານອອກ.

ການຕິດຕາມກະແສເງິນທຶນໄຫຼເຂົ້າ-ອອກ ສປປ ລາວ: ໃນປີ 2022 ໄດ້ຢັ້ງຢືນການນຳເຂົ້າທຶນໃຫ້ວິສາຫະກິດຕ່າງປະເທດ ທັງໝົດ 5 ບໍລິສັດ ລວມມູນຄ່າ 54,16 ລ້ານໂດລາສະຫະລັດ ຫຼື ທຽບເທົ່າ 626,64 ຕື້ກີບ; ຄຽງຄູ່ກັນນັ້ນ ຍັງໄດ້ລົງເກັບ ກຳຂໍ້ມູນການຊຳລະສະສາງເຂດດ່ານຊາຍແດນໃນແຂວງໄຊຍະບູລີ ເພື່ອເກັບກຳຂໍ້ມູນການນຳເງິນສົດ ແລະ ວັດຖຸມີຄ່າເຂົ້າ-ອອກ ສປປ

ລາວ ຜ່ານດ່ານຊາຍແດນ ແລະ ເກັບກຳຂໍ້ມູນການນຳໃຊ້ເອກະສານ, ຫຼັກຖານການຊຳລະສິນຄ້າ ທີ່ນຳເຂົ້າ-ສົ່ງອອກກັບຕ່າງ ປະເທດ ຜ່ານລະບົບທະນາຄານ; ສົມທົບກັບ ປກສ ແຂວງຫຼວງພະບາງ ແລະ ພະແນກການ ທີ່ກ່ຽວຂ້ອງຂອງແຂວງເຄື່ອນໄຫວ ຕິດຕາມກວດກາ, ແນະນຳ ແລະ ຕັກເຕືອນບັນດາຫົວໜ່ວຍທຸລະກິດ ທີ່ມີການຕິດລາຄາສິນຄ້າເປັນເງິນຕາຕ່າງປະເທດ ຈຳນວນ 320 ຫົວໜ່ວຍ, ໃນນັ້ນໄດ້ສ້າງບົດບັນທຶກກັບຫົວໜ່ວຍທຸລະກິດ ທີ່ລະເມີດລະບຽບກົດໝາຍ ຈຳນວນ 23 ຫົວໜ່ວຍ. ສ່ວນແຂວງໄຊຍະບູລີ ກໍ່ໄດ້ລົງສົມທົບກັບພະແນກການກ່ຽວຂ້ອງ, ອຳນາດການປົກຄອງເມືອງໃນ 7 ເມືອງ ຄື: ເມືອງໄຊຍະບູລີ ແລະ 6 ເມືອງ ທີ່ມີຊາຍແດນຕິດກັບປະເທດເພື່ອນບ້ານ ເພື່ອຕິດຕາມກວດກາການຕິດປະກາດ, ໂຄສະນາຄ່າສິນຄ້າ ແລະ ບໍລິການ ເປັນເງິນຕາຕ່າງປະເທດ ພ້ອມທັງແນະນຳຕັກເຕືອນ ແລະ ສ້າງບົດບັນທຶກກັບຮ້ານທີ່ລະເມີດລະບຽບກົດໝາຍ.

ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ: ເພື່ອຮັບປະກັນຄວາມໝັ້ນຄົງໃນການເຄື່ອນໄຫວວຽກງານຂອງຂະແໜງທະນາຄານ, ທຫລ.ຫຼບ ໄດ້ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ກວດກາ ສາຂາ ແລະ ໜ່ວຍບໍລິການທະນາຄານທຸລະກິດ ໂດຍໄດ້ດຳເນີນການກວດກາທາງເອກະສານ; ວິເຄາະຖານະການເງິນ ແລະ ລົງກວດກາກັບທີ່. ຄຽງຄູ່ກັນນັ້ນ, ໄດ້ສົ່ງເສີມໃຫ້ສາຂາທະນາຄານທຸລະກິດລະດົມເງິນຝາກ ແລະ ປ່ອຍສິນເຊື່ອໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ; ສືບຕໍ່ຕິດຕາມການເກັບກູ້ໜີ້ສິນ ໂດຍສະເພາະໜີ້ທີ່ບໍ່ເກີດດອກອອກຜົນ (NPL), ຄຽງຄູ່ກັນນັ້ນ, ທະນາຄານທຸລະກິດພາຍໃນ 2 ແຂວງ ຍັງສືບຕໍ່ຂະຫຍາຍ ແລະ ນຳໃຊ້ຜະລິດຕະພັນທີ່ທັນສະໄໝເຂົ້າບໍລິການຮັບໃຊ້ສັງຄົມຢ່າງຕໍ່ເນື່ອງ.

ມາຮອດປະຈຸບັນ ສາຂາຂອງທະນາຄານທຸລະກິດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງ ທຫລ.ຫຼບ ມີທັງໝົດ 11 ສາຂາ, 55 ໜ່ວຍບໍລິການ ແລະ ມີຕູ້ ATM ທັງໝົດ 164 ຕູ້. ພ້ອມນັ້ນ, ຍັງໄດ້ເອົາໃຈໃສ່ຄຸ້ມຄອງສະຖາບັນການເງິນຈຸລະພາກ ໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ມາຮອດປະຈຸບັນມີສະຖາບັນການເງິນ ທັງໝົດ 17 ແຫ່ງ. ໃນນັ້ນ, ມີສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ 5 ແຫ່ງ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນ 4 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 4 ແຫ່ງ ແລະ ສາຂາບໍລິສັດເຊົ່າສິນເຊື່ອ 4 ແຫ່ງ.

ທ່ານ ນາງ ໂພທິຈັນ ທຳມະເທວາ ຫົວໜ້າ ທຫລ.ຫຼບ ກ່າວຕື່ມວ່າ: ເພື່ອຜັນຂະຫຍາຍ ແລະ ປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ແຜນພັດທະນາເສດຖະກິດຂອງແຂວງ; ທຫລ.ຫຼບ ໄດ້ເປີດກອງປະຊຸມປຶກສາຫາລື ຮ່ວມກັບທະນາຄານທຸລະກິດ ເພື່ອຊຸກຍູ້ໃຫ້ທະນາຄານທຸລະກິດເພີ່ມການລະດົມທຶນ ແລະ ປ່ອຍສິນເຊື່ອຊຸກຍູ້ການຜະລິດເພື່ອສົ່ງອອກ ແລະ ຜະລິດທົດແທນການນຳເຂົ້າ, ສິນເຊື່ອ SME ແລະ ສິນເຊື່ອແກ້ໄຂຄວາມຫຍຸ້ງຍາກ ແລະ ວຽກງານ 3 ສ້າງ. ໃນໄລຍະທ້າຍປີ 2022 ທຫລ.ຫຼບ ໄດ້ສົມທົບກັບນະຄອນຫຼວງພະບາງ, ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ເປີດກອງປະຊຸມປຶກສາຫາລື ກ່ຽວກັບຈຸດສຸມພັດທະນາເສດຖະກິດ ທີ່ຕິດພັນກັບວາລະແຫ່ງຊາດການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ແຜນພັດທະນາເສດຖະກິດສັງຄົມຂອງແຂວງໃນນະຄອນຫຼວງພະບາງ ເພື່ອເປັນການເກັບກຳຂໍ້ມູນນຳມາຄົ້ນຄວ້າ, ການສະໜອງສິນເຊື່ອຂອງທະນາຄານ ແລະສະຖາບັນການເງິນຕ່າງໆໃຫ້ກັບບັນດາຫົວໜ່ວຍທຸລະກິດ ແລະ ພໍ່ແມ່ປະຊາຊົນ ໃນນະຄອນຫຼວງພະບາງ ເຊິ່ງວຽກງານດັ່ງກ່າວໄດ້ສືບຕໍ່ປຶກສາຫາລືກັບບັນດາເມືອງຕ່າງໆຂອງແຂວງຕໍ່ໄປ.

ວຽກງານລະດົມເງິນຝາກ, ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກພາຍໃນ 2 ແຂວງ ສາມາດລະດົມເງິນຝາກໄດ້ທັງໝົດ 7.145.99 ຕື້ກີບ ເພີ່ມຂຶ້ນ 20,44% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ; ຂະນະດຽວກັນນັ້ນ, ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ພາຍໃນ 2 ແຂວງ ສາມາດສະໜອງສິນເຊື່ອເຂົ້າໃນຂົງເຂດເສດຖະກິດໄດ້ທັງໝົດ 1.909,09 ຕື້ກີບ ຫຼຸດລົງ 2,83% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ໃນນີ້ສຸມໃສ່ປ່ອຍສິນເຊື່ອໃຫ້ແກ່ບັນດາຂະແໜງການເສດຖະກິດ ທີ່ເປັນບູລິມະສິດຂອງແຂວງເຊັ່ນ: ຂະແໜງກະສິກຳ-ປ່າໄມ້ ກວມ 25,32%, ການຄ້າ ກວມ 31,85%; ບໍລິການ ກວມ 11,33%; ຂະແໜງອຸດສາຫະກຳ-ຫັດຖະກຳ ກວມເອົາ 5,71%; ພ້ອມນີ້, ທະນາຄານທຸລະກິດແລະສະຖາບັນການເງິນ ໄດ້ປ່ອຍສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ (SME) ທັງໝົດ 333,45 ຕື້ກີບ ກວມເອົາ 20,58% ຂອງ

ຍອດສິນເຊື່ອທັງໝົດ; ປ່ອຍສິນເຊື່ອໃຫ້ກັບຫົວໜ່ວຍທຸລະກິດທີ່ຜະລິດເປັນສິນຄ້າສົ່ງອອກໄດ້ທັງໝົດ 52,78 ຕື້ກີບ ແລະປ່ອຍສິນເຊື່ອໃຫ້ກັບຫົວໜ່ວຍທຸລະກິດທີ່ຜະລິດທົດແທນການນໍາເຂົ້າ ໄດ້ທັງໝົດ 371,96 ຕື້ກີບ.

ຄຽງຄູ່ກັນນັ້ນ; ທະນາຄານນະໂຍບາຍ ໄດ້ຈັດຕັ້ງປະຕິບັດໜ້າທີ່ໃນການສະໜອງສິນເຊື່ອໃຫ້ບັນດາເມືອງເປົ້າໝາຍ, ເຂດຈຸດສຸມ ແລະ ບ້ານ 3 ສ້າງ ຕາມແນວທາງນະໂຍບາຍຂອງພັກ-ລັດ ໃນການສົ່ງເສີມການຜະລິດ ຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ ສາມາດປະຕິບັດວຽກງານສິນເຊື່ອໄດ້ທັງໝົດ 296,84 ຕື້ກີບ ເທົ່າກັບ 90,73% ຂອງແຜນການ. ໃນນັ້ນຍອດສິນເຊື່ອເມືອງເປົ້າໝາຍ 166,70 ຕື້ກີບ ກວມ 56,16%; ຈຸດສຸມລັດຖະບານ-ທ້ອງຖິ່ນ 20,04 ຕື້ກີບ ກວມ 6,75%; ບ້ານ 3 ສ້າງ 35,86 ຕື້ກີບກວມ 12,08% ແລະໂຄງການຜະລິດເປັນສິນຄ້ານອກເມືອງເປົ້າໝາຍ 74,23 ຕື້ກີບ ກວມ 25,01% ຂອງຍອດສິນເຊື່ອທັງໝົດ.

ທິດທາງແຜນການຮອດທ້າຍປີ 2023 ຈະສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ແຜນພັດທະນາເສດຖະກິດສັງຄົມຂອງແຂວງ ກໍຄືມະຕິຂອງກອງປະຊຸມໃຫຍ່ອົງຄະນະພັກແຂວງ ຕາມພາລະບົດບາດຂອງ ທຫລ.ຫຼບ ໃນນັ້ນ ຈະສືບຕໍ່ຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງເງິນຕາຕ່າງປະເທດພາຍໃນ 2 ແຂວງ ໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນໃຫ້ມີຄວາມໝັ້ນຄົງ ແລະເຄື່ອນໄຫວສອດຄ່ອງຕາມລະບຽບກົດໝາຍ; ສືບຕໍ່ຊຸກຍູ້ໃຫ້ທະນາຄານ ແລະ ສະຖາບັນການເງິນສືບລະດົມທຶນ ແລະ ຕໍ່ປ່ອຍສິນເຊື່ອເພື່ອຊຸກຍູ້ການຜະລິດເພື່ອສົ່ງອອກ, ການຜະລິດສິນຄ້າເພື່ອທົດແທນການນໍາເຂົ້າ, ສິນເຊື່ອວິສາຫະກິດຂະໜາດນ້ອຍ ແລະກາງ, ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ, ບ້ານ 3 ສ້າງ ແລະ ຂົງເຂດຈຸດສຸມພັດທະນາຂອງແຂວງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

*ຢູ່ເມືອງລາວ ໃຊ້ເງິນກີບລາວ*